ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 1206 /ຫຄຊກລ

ນະຄອນຫຼວງວຽງຈັນ, ວັນທີ 07 ພະຈິກ 2024

# ບົດບັນທຶກ

## ກອງປະຊຸມກຸ່ມວິຊາການ ສຳຫຼວດ-ເກັບກູ້ ລບຕ ປະຈຳໄຕມາດ 04 ປີ 2024

### I. ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ໃນເວລາ 8:30–16:00 ໂມງ ຂອງວັນທີ 30 ຕຸລາ 2024 ທີ່ຫ້ອງປະຊຸມ ໂຮມແຮມ ແລນມາກ, ບ້ານຫາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ. ໄດ້ຈັດກອງປະຊຸມ ກຸ່ມວິຊາການສຳຫຼວດ ແລະ ເກັບກູ້ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ປະຈຳໄຕມາດ 04 ປີ 2024 ຂຶ້ນ, ພາຍໃຕ້ການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ແລະ ມີບັນດາທ່ານແຂກຖືກເຊີນເຂົ້າຮ່ວມທັງໝົດ: 40 ທ່ານ, ຍິງ 7 ທ່ານ (ລາຍລະອຽດມີລາຍຊື່ຄັດຕິດມາພ້ອມນີ້)

### II. ຈຸດປະສົງ

- ລາຍງານຜົນສຳເລັດ ສິ່ງທ້າທາຍ ການປະຕິບັດງານ 10 ເດືອນ ປີ 2024 ແລະ ແຜນປະຕິບັດງານ ປີ 2025 ຂອງບັນດາອົງການປະຕິບັດງານ.
- ລາຍງານຄວາມຄືບໜ້າ ກ່ຽວກັບ ວຽກງານການເຊື່ອມສານບົດບາດ ຍິງ-ຊາຍ ເຂົ້າໃນຂະແໜງການ ລບຕ ຂອງ ສປປ ລາວ.
- ລາຍງານຄວາມຄືບໜ້າ ນະໂຍບາຍ ບູລິມະສິດ ວຽກງານກວດກູ້ ລບຕ.
- ລາຍງານຄວາມຄືບໜ້າ ປັບປຸງມາດຕະຖານແຫ່ງຊາດ.
- ປັບປຸງຕົວຊີ້ວັດໃນແຜນຍຸດທະສາດແຫ່ງຊາດ ສະບັບທີ III.
- ລາຍງານຜົນສຳເລັດຂອງການທຳລາຍບົ່ມໃຫຍ່ MK117 ຢູ່ເມືອງວຽງໄຊ, ແຂວງຫົວພັນ.
- ລາຍງານຜົນສຳເລັດຂອງການທຳລາຍບົ່ມໃຫຍ່ MK 82, Fuse M 904 ຢູ່ເມືອງເຊໂປນ, ແຂວງສະຫວັນນະເຂດ.
- ບັນຫາອື່ນໆທີ່ພົວພັນກັບກອງປະຊຸມ:
  - ກ່ຽວກັບບົ່ມ MK 82, Fuse 346 ຢູ່ແຂວງອັດຕະປື
  - ກ່ຽວກັບບົ່ມໃຫຍ່ ທີ່ພົບເຫັນໃໝ່ ຢູ່ເຂດອະນຸສອນສະຖານ ທ່ານ ມາ ໄຊຄຳພິທູນ ເມືອງ ເຊໂປນ ແຂວງສະຫວັນນະເຂດ.

### III. ເນື້ອໃນກອງປະຊຸມ

- ທ່ານ ບຸນເພັງ ສີສະຫວັດ ຫົວໜ້າຫ້ອງການ ຄຊກລ ໄດ້ກ່າວເປີດກອງປະຊຸມ ແລະ ສັງເຂບໂດຍຫຍໍ້ ກ່ຽວກັບຜົນສຳເລັດຂອງການຈັດຕັ້ງປະຕິບັດໃນ 10 ເດືອນຂອງວຽກງານສຳຫຼວດ-ກວດກູ້ ລບຕ ຂອງຂະແໜງການ ລບຕ.



สแกนด้วย CamScanner

- ທົບທວນຄືນຜົນຂອງກອງປະຊຸມກຸ່ມວິຊາການ ສຳຫຼວດ ແລະ ເກັບກູ້ ລບຕ ທີ່ຜ່ານມາ ໃນໄຕມາດ III, ເຊິ່ງປະທານກອງປະຊຸມ ໄດ້ໃຫ້ຄຳເຫັນວ່າ: ບົ່ມໃຫຍ່ທີ່ພົບເຫັນຢູ່ກ້ອງແລວສາຍໄຟຟ້າແຮງສູງ ຢູ່ບ້ານນ້ຳຊວນ, ເມືອງພູວົງ, ແຂວງອັດຕະປື  ແມ່ນຍັງບໍ່ທັນມີຄວາມຄືບໜ້າໃນການແກ້ໄຂ, ຊຶ່ງມອບໃຫ້ໜ່ວຍງານຄຸ້ມຄອງການສຳຫຼວດ ແລະ ເກັບກູ້ ປະສານສົມທົບຄືນກັບພາກສ່ວນທີ່ກ່ຽວຂ້ອງ (UXO Lao ຫຼື NPA) ອົງການໃດຮັບຜິດຊອບໃນການປະຕິບັດງານຢູ່ບ້ານດັ່ງກ່າວ, ຫຼັງຈາກໄດ້ຮັບຊາບຂໍ້ມູນແລ້ວ ໃຫ້ພາກສ່ວນດັ່ງກ່າວ ຮັບຜິດຊອບ,ພ້ອມທັງປະສານງານຫາ ບໍລິສັດ EDL Gen ເພື່ອແຈ້ງຂໍ້ມູນ , ປຶກສາຫາລື ກ່ຽວກັບທຶນສະໜັບສະໜູນ ແລະ ເລັ່ງການດຳເນີນການໂດຍໄວ ພ້ອມແຈ້ງຜົນການດຳເນີນງານ ມາຍັງ ຫ້ອງການ ຄຊກລ. ການຝຶກອົບຮົມ SEOD ປັດຈຸບັນແມ່ນໄດ້ສຳເລັດການຝຶກພາກທິດສະດີແລ້ວ, ກຳລັງລົງປະຕິບັດໂຕຈິງຢູ່ໃນ 3 ເມືອງ ຂອງແຂວງສາລະວັນ ເຊິ່ງເປັນແຂວງທີ່ມີບົ່ມໃຫ່ຍຕົກຄ້າງ ເປັນຈຳນວນຫຼວງຫຼາຍຕາມການສຳຫຼວດຕົວຈິງ.
- ລາຍງານ ຄວາມຄືບໜ້າກ່ຽວກັບ ວຽກງານການເຊື່ອມສານດ້ານບົດບາດຍິງ-ຊາຍ ຂອງຂະແໜງການ ລບຕ: ພາຍຫຼັງກອງປະຊຸມ ຜູ້ປະສານງານບົດບາດຍິງ-ຊາຍ ແລະ ຜູ້ປະສານງານບົດບາດ ຍິງ-ຊາຍ ໃນກຸ່ມວິຊາການ ຂອງຂະແໜງການ ລບຕ ໃນວັນທີ 30 ກັນຍາ ເຊິ່ງໄດ້ຕົກລົງກັນວ່າ: ຈະມີການຈັດກອງປະຊຸມຜູ້ປະສານງານ ດ້ານບົດບາດ ຍິງ-ຊາຍ ໃນເດືອນ ທີ 2 ຂອງທຸກໆໄຕມາດ (ກຸມພາ, ພຶດສະພາ, ສິງຫາ ແລະ ພະຈິກ), ສຳລັບແຜນໃນ ໄຕມາດ 4 ປີ 2024 ນີ້ຈະມີ 2 ກອງປະຊຸມຄື: ກອງປະຊຸມປຶກສາຫາລື ແລະ ກອງປະຊຸມ ສຳມະນາ ກ່ຽວກັບການເປັນຜູ້ນຳ.
- ລາຍງານຜົນສຳເລັດ ການປະຕິບັດງານ 10 ເດືອນ ປີ 2024 ຂອງໜ່ວຍງານ: ໄດ້ສຳເລັດຈັດກອງປະຊຸມກຸ່ມວິຊາການ ເກັບກູ້ ລບຕ, ສຳເລັດລົງຕິດຕາມການປະຕິບັດງານ, ສຳເລັດການຝຶກອົບຮົມວຽກງານສ້າງແຜນ ແລະ ຈັດບູລິມະສິດກວດກູ້ ລບຕ, ສຳເລັດທຳລາຍບົ່ມໃຫຍ່ 3 ຄັ້ງ ທີ່ມີຟິວອັນຕະລາຍ ແລະ ຫ້າງແລ້ວ (ແຂວງສະຫວັນນະເຂດ, ຈຳປາສັກ, ຫົວພັນ), ສຳເລັດການຝຶກອົບຮົມທິດສະດີວິຊາການທຳລາຍລະເບີດຂັ້ນ 4, ສຳເລັດຍົກລະດັບຈາກ EOD2 ຂຶ້ນ EOD3 ແລະ ຝຶກອົບຮົມແພດສະໜາມ, ສຳລັບ ວຽກງານສຳຫຼວດ TS, NTS, ທຳລາຍເຄື່ອນທີ່, ວຽກງານກວດກູ້ ແມ່ນສຳເລັດໄປກວ່າ 80%.
- ສິ່ງທ້າທາຍ: ວຽກງານ NTS ຈຳນວນບ້ານ ທີ່ມີຂໍ້ມູນການຕົກຄ້າງ ລບຕ ລົງເຮັດວຽກຕົວຈິງສຳເລັດ, ການກວດກູ້ເນື້ອທີ່ ບາງອົງການບໍ່ສາມາດບັນລຸຕາມແຜນ, ມີຫຼາຍສາເຫດບໍ່ສາມາດບັນລຸຕາມຄາດໝາຍ ຍ້ອນມີບາງພື້ນທີ່ເສັ້ນທາງບໍ່ສາມາດເຂົ້າເຖິງໄດ້, ການສື່ສານບໍ່ທັນຄອບຄຸມພື້ນທີ່ເຮັດວຽກ, ພື້ນທີ່ຢັ້ງຢືນມີ ລບຕ ຕົກຄ້າງຫ່າງໄກອອກໄປເຂົ້າເຖິງຍາກ, ພື້ນທີ່ກວດກູ້ສ່ວນຫຼາຍເສຍເວລາໃນການຖາງປ່າ, ຕັດຫຍ້າ; ອຸປະກອນຮັບໃຊ້ ເທັກໂນໂລຢີ ບໍ່ທັນຖືກນຳໃຊ້, ທຶນຕອບສະໜອງການທຳລາຍແບບເຄື່ອນທີ່ຫຼຸດລົງ ແລະ ຫຼາຍແຂວງບໍ່ທັນມີທຶນສະໜັບສະໜູນການປະຕິບັດງານ.
- ລາຍງານແຜນປະຕິບັດງານ 2025: ຈັດກອງປະຊຸມ ກຸ່ມວິຊາການສຳຫຼວດ-ເກັບກູ້ ລບຕ, ລົງຕິດຕາມຊຸກຍູ້ ວຽກງານ ສຳຫຼວດ, ເກັບກູ້ ລບຕ, ສືບຕໍ່ພັດທະນາ ແລະ ປັບປຸງມາດຕະຖານແຫ່ງຊາດ, ພັດທະນາ ແລະ ທົດລອງນຳໃຊ້ ນະໂຍບາຍ ບູລິມະສິດກວດກູ້ ລບຕ ຂອງ ຂະແໜງການ, ຈັດຝຶກອົບຮົມວິຊາການທຳລາຍ ລບຕ ຂັ້ນ 4, ຈັດຝຶກອົບຮົມທົບທວນ ຫຼັກສູດວິຊາການທຳລາຍ ລບຕ ຂັ້ນ 4, ທົດລອງຮູບແບບການສຳຫຼວດ ການປະເມີນຈຸດຫຼັກຖານແບບຫຼາຍຊັ້ນ (LEAP), Drone ແລະ EDD.
- ນະໂຍບາຍການຈັດບູລິມະສິດ ກວດກູ້ ລບຕ: ໃນກອງປະຊຸມໄດ້ມີການເຜີຍແຜ່ ນະໂຍບາຍການຈັດບູລິມະສິດ ວຽກງານ ກວດກູ້ ສະບັບຮ່າງເພື່ອໃຫ້ຜູ້ເຂົ້າຮ່ວມມີຄວາມຄິດເຫັນເພີ່ມໃສ່ເອກະສານ ໃຫ້ມີຄວາມເປັນເອກະພາບ ແລະ ສົມບູນຂຶ້ນ, ໃນເອກະສານປະກອບມີ ປະຫວັດຄວາມເປັນມາ, ເປົ້າໝາຍ , ແລະ ເງື່ອນໄຂໃນການຈັດບູລິມະສິດ (ສູງ, ກາງ, ຕ່ຳ), ຄຳເຫັນຈາກຊ່ຽວຊານ UNDP ໄດ້ໃຫ້ຄຳເຫັນແລກປ່ຽນ: ຢາກໃຫ້ແຍກການຈັດບູລິມະສິດອອກເປັນ 2 ສ່ວນ (ດ້ານມະນຸດສະທຳ ແລະ ທຸລະກິດ



สแกนด้วย CamScanner

ໂຄງຮ່າງພື້ນຖານໂຄງລ່າງ), ລະບົບການໃຫ້ຄະແນນ ສູງ-ກາງ-ຕ່ຳ ຢາກໃຫ້ຮັກສາໄວ້ໃນເອກະສານເພື່ອເປັນບ່ອນອີງ.

- ການປັບປຸງຕົວຊີ້ວັດ: ກອງປະຊຸມໄດ້ມີການປຶກສາຫາລື ກ່ຽວກັບ ການສ້າງຕົວຊີ້ວັດ ແຜນຍຸດທະສາດແຫ່ງຊາດ ວ່າດ້ວຍ ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, ໄລຍະ 2021 - 2030, ໂດຍສະເພາະ ຕົວຊີ້ວັດ ທີ່ກ່ຽວຂ້ອງກັບວຽກງານການສຳຫຼວດ-ກວດກູ້ ແລະ ກອງປະຊຸມ ໄດ້ມີການປະກອບຄຳຄິດຄຳເຫັນ ດັ່ງຕໍ່ໄປນີ້:
  - ທຶນສະໜັບສະໜູນ ສຳລັບ ຂະແໜງການ ລບຕ ໃນ ສປປ ລາວ ໃນໄລຍະ 4-5 ປີ ຂ້າງໜ້າ ອາດຈະມີການປ່ຽນແປງ ແລະ ອາດຈະມີຜົນກະທົບຕໍ່ຜົນໄດ້ຮັບຂອງການກວດກູ້.
  - ກອງປະຊຸມ ໄດ້ຕົກລົງເຫັນດີວ່າ ການເກັບກຳຂໍ້ມູນ ສຳລັບ ຕົວຊີ້ວັດ ຈະບໍ່ລວມເອົາຕົວເລກການກວດກູ້ຂອງບໍລິສັດເອກະຊົນ ເນື່ອງຈາກວ່າ ແຜນຍຸດທະສາດ ແມ່ນເນັ້ນໃສ່ວຽກງານການກວດກູ້ລະເບີດ ເພື່ອມະນຸດສະທຳ.
  - ກອງປະຊຸມ ໄດ້ຕົກລົງເຫັນດີໃຫ້ຮັກສາຮ່າງຕົວຊີ້ວັດທີ່ໄດ້ນຳສະເໜີ. ໃນປີ 2025, ຈະມີການປະເມີນແຜນຍຸດທະສາດແຫ່ງຊາດ ກາງສະໄໝ. ດັ່ງນັ້ນ, ຍັງຈະມີໂອກາດໄດ້ທົບທວນ ແລະ ປັບປຸງຕົວຊີ້ວັດດັ່ງກ່າວ.

  ພາກສ່ວນທີ່ກ່ຽວຂ້ອງຂອງຫ້ອງການ ຄຊກລ ຈະນຳເອົາການປະກອບຄຳຄິດຄຳເຫັນ ໄປປັບປຸງຮ່າງຕົວຊີ້ວັດ. ຫຼັງຈາກນັ້ນ, ກໍຈະໄດ້ມີການຂໍອະນຸມັດນຳໃຊ້ຕົວຊີ້ວັດດັ່ງກ່າວ ຈາກກະຊວງການຕ່າງປະເທດ. ຄາດຄະເນວ່າ ຈະສາມາດນຳໃຊ້ ແລະ ເລີ່ມເກັບກຳຂໍ້ມູນ ນັບແຕ່ຕົ້ນປີ 2025 ເປັນຕົ້ນໄປ.

- ລາຍງານຜົນສຳເລັດ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດວຽກງານການສຳຫຼວດ ແລະ ເກັບກູ້ ໃນ 09 ເດືອນ ປີ 2024 ຂອງບັນດາອົງການປະຕິບັດງານ (ເດືອນ 10 ກຳລັງລວບລວມຂໍ້ມູນ), ການປະຕິບັດງານແມ່ນໄດ້ດຳເນີນມາ ແມ່ນມີຄວາມຄືບໜ້າຫຼາຍສົມຄວນ ແລະ ໄປຕາມແຜນທີ່ວາງໄວ້ໃນ ປີ 2024. ມີບາງອົງການສົ່ງມາຕົວເລກບໍ່ທັນຄົບຖ້ວນ ຖ້າທຽບໃສ່ຕົວເລກທີ່ອົງການປະຕິບັດງານນຳສະເໜີຜົນສຳເລັດ ຂອງອົງການຕົນມາສະເໜີຕໍ່ກອງປະຊຸມ, ຈຶ່ງຢາກໃຫ້ແຕ່ລະອົງການປະຕິບັດງານສົ່ງໂຕເລກເຂົ້າມາໃຫ້ເປັນປົກກະຕິ ແລະ ທັນເວລາທີ່ໄດ້ກຳນົດໄວ້.
- ໂຄງການເກັບກູ້ລະເບີດແຫ່ງຊາດ ໄດ້ລາຍງານຜົນສຳເລັດຂອງການທຳລາຍ Bomb MK117, 750 lb ຢູ່ທີ່ເມືອງວຽງໄຊ, ແຂວງຫົວພັນ: ໄດ້ຮັບລາຍງານການພົບ ລບຕ ໃນວັນທີ 26 ກັນຍາ, ໃນມື້ຕໍ່ມາທີມງານໄດ້ລົງສຳຫຼວດ ພົບວ່າບົ່ມຢູ່ເຂດຊຸມຊົນ, ໃກ້ໂຮງຮຽນ ແລະ ໃກ້ຂົວພຽງ 7ແມັດ, ຍັງເປັນຟິວທີ່ບໍ່ສາມາດຍ້າຍອອກໄດ້, ແຕ່ຍ້ອນເປັນພື້ນທີ່ສ່ຽງ ຈຶ່ງໄດ້ປຶກສາຫາລືກັບຊ່ຽວຊານ ແລະ ຫ້ອງການ ຄຊກລ ເຫັນດີເປັນເອກະພາບຕົກລົງ ສ້າງຄວາມປອດໄພໃຫ້ບົມກ່ອນຈະຍ້າຍໄປທຳລາຍບ່ອນທີ່ປອດໄພ,ໄດ້ສຳເລັດການທຳລາຍໃນວັນທີ 22 ຕຸລາ 2024 ດ້ວຍຄວາມປອດໄພ 100 ເປີເຊັນ.
- ອົງການຮາໂລທຣາສ໌ ລາຍງານຜົນສຳເລັດໃນການທຳລາຍ Bomb Mk 82 ຢູ່ທີ່ບ້ານເພືອງ, ເມືອງເຊໂປນແຂວງສະຫວັນນະເຂດ ໄດ້ຮັບລາຍງານພົບ ລບຕ ໃນວັນທີ 12 ຕຸລາ, ທີມງານໄດ້ລົງສຳຫຼວດທັນທີ ແລະ ພົບວ່າເປັນ ບົ່ມ Mk 82, ຟິ ຫົວ M904 ທາງກົ້ນເປັນຝາຢາງອັດ ບໍ່ມີຟິວ ແລະ ຢູ່ໃນເຂດພື້ນທີ່ສ່ຽງ ເປັນເຂດຊຸມຊົນໃກ້ສາຍໄຟແຮງສູງ, ສາງເກັບເຄື່ອງ ແລະ ບ້ານເຮືອນປະຊາຊົນ, ຕ້ອງໄດ້ເຄື່ອນຍ້າຍ ໃນຊ່ວງລໍຖ້າໜັງສືອະນຸຍາດ ພວກເຮົາແກ້ໄຂດ້ວຍການນຳເອົາແປ້ງ ມາໂອບເຂັມສັບໄວ້. ພາຍຫຼັງທີ່ໄດ້ຮັບໜັງສືຈາກ ຫຄຊກລ ໃນວັນທີ 22 ຕຸລາ 2024 ທີ່ອະນຸມັດໃຫ້ສາມາດເຄື່ອນຍ້າຍໄດ້ ກໍ່ໄດ້ເລັ່ງດຳເນີນການເຄື່ອນຍ້າຍໄປຍັງສະໜາມທຳລາຍ ໄລຍະທາງກວ່າ 133 KM, ສາມາດໄປຮອດສະໜາມທຳລາຍ ແລະ ດຳເນີນການທຳລາຍໄດ້ສຳເລັດພາຍໃນມື້ ດ້ວຍຄວາມປອດໄພ.

ບ້ານ ໜອງບອນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ຕູ້ ປນ 7261, ໂທລະສັບ 030 4487791, 030 4830113, ອີເມວ: uxo.nra@gmail.la, ເວບໄຊ໌: www.nra.gov.la


สแกนด้วย CamScanner

## IV. ສະຫຼຸບ, ຂໍ້ແນະນຳຕໍ່ກອງປະຊຸມ:

- ກອງປະຊຸມໄດ້ເອກະພາບກ່ຽວກັບລາຍງານຜົນສຳເລັດ ໃນການຈັດຕັ້ງປະຕິບັດຂອງ 10 ເດືອນ ປີ 2024 ແລະ ສະເໜີໃຫ້ເອົາຄວາມຄືບໜ້າຂອງແຕ່ລະບັນຫາ ມາສະເໜີໃຫ້ກອງປະຊຸມຮັບຊາບໃນການປະຊຸມໃນໄຕມາດຕໍ່ໄປ ວຽກຫັຍງແດ່ທີ່ດຳເນີນສຳເລັດ, ວຽກໃດທີ່ຍັງຄົງຄ້າງ ແລະ ຈະສືບຕໍ່ແກ້ໄຂແນວໃດ.
- ຂໍໃຫ້ອີງການປະຕິບັດງານ ສະໜອງແຜນ ປີ 2025 ໃຫ້ໜ່ວຍງານຄຸ້ມຄອງການສຳຫຼວດ ແລະ ເກັບກູ້ ຫ້ອງການ ຄຊກລ ເພື່ອລວບລວມເປັນແຜນຂອງຂະແໜງການ ແລະ ສະດວກໃນການຕິດຕາມແຜນ.
- ທົບທວນຄືນກ່ຽວກັບການສຳຫຼວດ ຊອກຫາຈຸດຫຼັກຖານລະເບີດລູກຫວ່ານ ແລະ ຜົນການສຳຫຼວດຜ່ານມາ ໃຫ້ໂຕເລກມີຄວາມສອດຄ່ອງກັບຕົວຈິງ.
- ໃຫ້ສືບຕໍ່ໂຄງການ IM CD Project ຂະຫຍາຍໄປແຂວງອື່ນໆ ເຊິ່ງ WRA ໄດ້ເຫັນດີແລ້ວ.
- ໃຫ້ ກອງທັບເພື່ອມະນຸດສະທຳ 58 ເຄື່ອນໄຫວທຳລາຍແກ້ໄຂສຸກເສີນ, ບໍ່ພຽງແຕ່ປະຈຳສະເພາະຢູ່ແຂວງວຽງຈັນ ແລະ ບໍລິຄຳໄຊ ຖ້າແຂວງໃດຢາກໃຫ້ມີການສຳຫຼວດ ກໍ່ໃຫ້ສາມາດຕອບສະໜອງໄດ້.
- ໂຄງການທົດລອງການນຳໃຊ້ໂດຣນ ແມ່ນໃຫ້ມີການທົດລອງຮ່ວມກັນໃນປີ 2025 ນີ້.
- ໃຫ້ຄົ້ນຄວ້າຄືນຕາມການສະເໜີຂອງ UXO lao ກ່ຽວກັບເຄື່ອງກວດເລີກ.
- ກ່ຽວກັບບໍ່ມໃຫຍ່ຢູ່ແຂວງອັດຕະປື ຫຼັງຈາກປະສານງານກັບຜູ້ຮັບຜິດຊອບແລ້ວ ແລະ ເຊີນ EDL Gen ມາປຶກສາຫາລືແກ້ໄຂບັນຫາ, ໃຫ້ເພີ່ມການປະສານກັບອຳນາດການປົກຄອງທ້ອງຖິ່ນ (ເມືອງ ແລະ ແຂວງ) ໃຫ້ທ້ອງຖິ່ນປະສານງານຊ່ວຍ ໃຫ້ການດຳເນີນວຽກເພື່ອໄດ້ຮັບການຮ່ວມມື ແລະ ມີຄວາມວ່ອງໄວຂຶ້ນ.
- ສະເໜີໃຫ້ໜ່ວຍງານຮັບຜິດຊອບ ສຸມໃສ່ປັບປຸງເນື້ອໃນມາດຕະຖານແຫ່ງຊາດນີ້ໃຫ້ທັນຕາມກຳນົດເວລາທີ່ວາງໄວ້.

**ປະທານກອງປະຊຸມ** | **ຜູ້ບັນທຶກກອງປະຊຸມ**

**ບຸນເພັງ ສີສະຫວັດ**

ບ້ານ ໜອງບອນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ຕູ້ ປນ 7261, ໂທລະສັບ 030 4487791, 030 4830113, ອີເມວ: uxo.nra@gmail.la, ເວບໄຊ: www.nra.gov.la



สแกนด้วย CamScanner